ບົດລາຍງານ
ຂອງ ທ່ານ ນາງເພັດສະໝອນ ສອນ, ຮອງລັດຖະມົນຕີ, ກະຊວງການເງິນ,
ຫົວໜ້າສູນສະຖິຕິແຫ່ງຊາດ, ຄະນະຊີ້ນຳລະດັບຊາດ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ລະດັບຊາດ, ຜູ້ປະຈຳການ
ຕໍ່ພິທີປະກາດຜົນຂອງການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ປີ 2025, ຄ້ຶງວັນທີ 20 ຕຸລາ 2026, ທີ່ ຫໍປະຊຸມແຫ່ງຊາດ

- **ຂໍນ້ອມມະນັດສະການ ພະເຖລະ ນຸເຖລະ;**
- **ຮຽນ: ສັນຕິພາບ ພົມວິຫານ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ, ປະທານຄະນະຊີ້ນຳລະດັບຊາດ ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ລະດັບຊາດ**
- **ຮຽນ: ບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ, ຄະນະຊີ້ນຳລະ ດັບຊາດສຳລັບການ ສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາ ໄສ ທົ່ວປະ ເທດ ຄັ້ງທີ V ປີ 2025, ທີ່ນັບຖື ແລະ ຮັກແພງ;**
- **ບັນດາທ່ານປະທານຄະນະກຳມະການປົກຄອງແຂວງ/ນະຄອນຫຼວງວຽງຈັນ, ຫົວໜ້າຄະ ນະຊີ້ນຳການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຂັ້ນແຂວງ, ນະຄອນຫຼວງ, ທີ່ນັບຖື ແລະ ຮັກແພງ;**
- **ບັນດາທ່ານ ທູຕານຸທູດ ແລະ ຜູ້ຕາງໜ້າຈາກສະຖານທູດປະຈຳລາວ;**
- **ບັນດາທ່ານຈາກບັນດາກະຊວງ ຂັ້ນສູນກາງ ແລະ ທ້ອງຖິ່ນ;**
- **ທ່ານຜູ້ຕາງໜ້າອົງການຈັດຕັ້ງສາກົນ, ອົງການທີ່ບໍ່ສັງກັດລັດຖະບານ;**
- **ບັນດາທ່ານຍິງ ແລະ ທ່ານຊາຍທີ່ຮັກແພງທັງຫຼາຍ.**

ຂ້າພະເຈົ້າມີຄວາມພາບກພູມໃຈ ແລະ ຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ເຂົ້າຮ່ວມພິທີປະກາດຜົນຂອງການສຳຫຼວດ ພົນລະ ເມືອງ ແລະທີ່ຢູ່ອາໄສທົ່ວປະເທດຄັ້ງທີ V ໃນມື້ນີ້. ຕາງໜ້າຄະນະຊີ້ນຳລະຊາດ, ທ້ອງການສຳຫຼວດຂັ້ນສູນກາງ, ກ່ຶ ໃນນາມສູນສະຖິຕິແຫ່ງຊາດ, ກະຊວງການເງິນ, ຂ້າພະເຈົ້າຂໍອະນຸຍາດຖືເປັນກຽດຢ່າງສູງສະຫຼຸບລາຍງານ ຜົນການ ຈັດຕັ້ງປະຕິບັດການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ V 2025 ດັ່ງນີ້:

I. ບ່ອນອີງ ແລະ ຈຸດປະສົງຂອງການສຳຫຼວດ

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ ຄັ້ງທີ V ໄດ້ດຳເນີນການໂດຍອີງໃສ່ກົດໝາຍວ່າດ້ວຍສະຖິຕິ ແລະ ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ 2016–2025 ແລະ ວິໄສທັດຮອດປີ 2030. ການ ຈັດຕັ້ງປະຕິບັດໄດ້ປະຕິບັດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີສະບັບເລກທີ 133/ນຍ, ລົງວັນທີ 16 ທັນວາ 2022 ແລະ ແຜນດຳເນີນງານຂອງຄະນະຊີ້ນຳ ສະບັບເລກທີ 011/ຄຊພ, ລົງວັນທີ 22 ເມສາ 2024.

ຈຸດປະສົງຕົ້ນຕໍ 3 ປະການ. **ປະການທີໜຶ່ງ,** ແມ່ນເພື່ອປັບປຸງຖານຂໍ້ມູນພົນລະເມືອງແຫ່ງຊາດໃຫ້ມີລາຍລະອຽດ ກ່ຽວກັບຄຸນລັກສະນະຂອງພົນລະເມືອງ, ໂຄງສ້າງເພດ ແລະ ອາຍຸ, ການຂະຫຍາຍຕົວ, ການເກີດ, ການເສຍຊີວິດ, ການຍົກຍ້າຍ, ການຈ້າງງານ, ຄຸນລັກສະນະທີ່ຢູ່ອາໄສ ແລະ ການເຂົ້າເຖິງການບໍລິການພື້ນຖານ. ຂໍ້ມູນດັ່ງກ່າວ ແມ່ນ ເພື່ອຮັບໃຊ້ການສ້າງນະໂຍບາຍພົນລະເມືອງ, ການຕິດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການຫຼຸດພົ້ນ ອອກຈາກສະຖານະປະເທດດ້ອຍພັດທະນາ ແລະການບໍລິລັກເປົ້າໝາຍການພັດທະນາແບບຍືນຍົງ. **ປະການທີສອງ,** ແມ່ນເພື່ອສ້າງຖານຂໍ້ມູນພູມີສາດແຫ່ງຊາດ ໂດຍເກັບກຳຈຸດທີ່ຕັ້ງຂອງອາຄານ, ທີ່ຢູ່ອາໄສ ແລະ ພື້ນຖານໂຄງລ່າງໃນ ທົ່ວປະເທດ, ເພື່ອສ້າງແຜນທີ່ເຂດສຳຫຼວດ ແລະ ແຜນທີ່ບ້ານແບບດິຈິຕອນ. ຖານຂໍ້ມູນນີ້ຈະຮັບໃຊ້ການ ອອກແບບ ການສຳຫຼວດ, ການວິເຄາະ ແລະ ເຜີຍແຜ່ຂໍ້ມູນຜ່ານລະບົບແຜນທີ່, ແລະ ການກຳນົດເປົ້າໝາຍໂຄງການຂອງລັດ ຖະ ບານໃຫ້ມີປະສິດທິຜົນ.

ປະການທີສາມ, ແມ່ນເພື່ອປັບປຸງພື້ນຖານໂຄງລ່າງດ້ານສະຖິຕິ ແລະ ສ້າງຂີດຄວາມສາມາດໃຫ້ແກ່ບຸກຄະລາກອນສະຖິຕິ ໃນການນຳໃຊ້ເຕັກໂນໂລຊີທັນສະໄໝ ເຂົ້າໃນຂະບວນການເກັບກຳ, ວິເຄາະ, ວິໄຈ ແລະ ເຜີຍແຜ່ຂໍ້ມູນ, ເພື່ອກ້າວໄປສູ່ການຜະລິດຂໍ້ມູນສະຖິຕິທີ່ມີຄຸນນະພາບ, ທັນສະໄໝ ແລະ ເປັນດິຈິຕອນ.

II. ກອບແນວຄວາມຄິດ ແລະ ຫຼັກການໃນການຈັດຕັ້ງປະຕິບັດການສຳຫຼວດ

ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຄັ້ງທີ V ໄດ້ນຳໃຊ້ຫຼັກການຈົດນັບພົນລະເມືອງ ທີ່ມີໜ້າຢູ່ເປັນປະຈຳ (De jure), ສອດຄ່ອງກັບຫຼັກການ ແລະ ຄຳແນະນຳຂອງສະຫະປະຊາຊາດ ແລະໄດ້ກຳນົດເວລາອ້າງອີງດຽວກັນທົ່ວປະເທດ.

ເວລາອ້າງອີງຂອງການຈົດນັບ ແມ່ນກຳນົດເອົາເວລາ 00:00 ໂມງ ຂອງວັນທີ 2 ພະຈິກ 2025. ພົນລະເມືອງທຸກຄົນ ແລະ ເຫດການທຸກຢ່າງ ໄດ້ຖືກຈົດບັນທຶກຕາມສະພາບທີ່ມີໃນເວລາດັ່ງກ່າວ, ເຖິງແມ່ນການເກັບກຳຂໍ້ມູນຕົວຈິງ ໄດ້ດຳເນີນໃນລະຫວ່າງວັນທີ 3 ພະຈິກ ຫາ 28 ທັນວາ 2025. ຫຼັກການນີ້ ຮັບປະກັນໃຫ້ບໍ່ມີການນັບຊ້ຳ ຫຼື ຕົກຫຼົ່ນ ເນື່ອງຈາກການເກີດ, ການຕາຍ ຫຼື ການຍົກຍ້າຍ ໃນໄລຍະເກັບກຳຂໍ້ມູນ.

ຜູ້ທີ່ຢູ່ໃນເປົ້າໝາຍຂອງການຈົດນັບ ແມ່ນບຸກຄົນທຸກຄົນ ທີ່ດຳລົງຊີວິດຢູ່ ສປປ ລາວ ເປັນປະຈຳແຕ່ 6 ເດືອນຂຶ້ນໄປ, ຫຼື ນ້ອຍກວ່າ 6 ເດືອນ ແຕ່ມີຈຸດປະສົງຈະຢູ່ຕັ້ງແຕ່ 6 ເດືອນຂຶ້ນໄປ, ບໍ່ວ່າຈະມີໜ້າຕົວຈິງ ຫຼື ບໍ່ມີໜ້າຊົ່ວຄາວ ໃນເວລາສຳຫຼວດ. ເປົ້າໝາຍດັ່ງກ່າວ ປະກອບມີພົນລະເມືອງລາວທຸກຄົນ, ຄົນຕ່າງປະເທດ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ອື່ນໆ.

ຄົນລາວທີ່ອາໄສຢູ່ຕ່າງປະເທດ: ຄົນລາວທີ່ໄດ້ຍ້າຍໄປຢູ່ຕ່າງປະເທດ ໃນໄລຍະ 2015–2025 ແລະ ຍັງດຳລົງຊີວິດຢູ່ຕ່າງປະເທດໃນເວລາສຳຫຼວດ ບໍ່ຖືວ່າເປັນພົນລະເມືອງທີ່ມີໜ້າຢູ່ເປັນປະຈຳ ແລະ ບໍ່ໄດ້ນັບເຂົ້າໃນພົນລະເມືອງທັງໝົດ. ແຕ່ວ່າ, ໄດ້ມີການສອບຖາມຂໍ້ມູນຂອງບຸກຄົນດັ່ງກ່າວຈາກຄົວເຮືອນ ແລະ ຈົດນັບແຍກຕ່າງຫາກ, ເພື່ອສະໜອງຂໍ້ມູນກ່ຽວກັບການຍົກຍ້າຍໄປຕ່າງປະເທດ.

III. ຂະບວນການຈັດຕັ້ງປະຕິບັດການສຳຫຼວດ

ພາຍຫຼັງການກະກຽມຄວາມພ້ອມດ້ານຕ່າງໆ ເປັນເວລາ 4 ປີ, ການສຳຫຼວດໄດ້ດຳເນີນຄົບຖ້ວນທັງ 3 ໄລຍະ ແລະ ເປັນຄັ້ງທຳອິດທີ່ ສປປ ລາວ ນຳໃຊ້ແທັບເລັດ, ແອັບພລິເຄຊັນການປີ (CAPI) ແລະ ລະບົບຂໍ້ມູນຂ່າວສານພູມີສາດ (GIS) ໃນການສຳຫຼວດພົນລະເມືອງຢ່າງເຕັມຮູບແບບ.

ໄລຍະທີ 1, ການຂຶ້ນບັນຊີອາຄານ ແລະ ທີ່ຢູ່ອາໄສຕາມທີ່ຕັ້ງພູມີສາດ, ໄດ້ດຳເນີນການພາກສະໜາມເປັນເວລາ 70 ວັນ ໃນລະຫວ່າງເດືອນມີນາ ຫາ ມິຖຸນາ 2025. ການສຳຫຼວດໄດ້ກຳນົດອາຄານປະມານ 3,6 ລ້ານຫຼັງ ດ້ວຍອັດຕາການຄຸ້ມຄອງປະມານ 99%, ແລະ ໄດ້ສ້າງແຜນທີ່ເຂດສຳຫຼວດສຸດທ້າຍ ຈຳນວນ 7.987 ເຂດແຈງນັບ ໃນ 18 ແຂວງ ສຳເລັດໃນເດືອນສິງຫາ 2025. ແຜນທີ່ດັ່ງກ່າວໄດ້ນຳໃຊ້ເພື່ອນຳທາງ ແລະ ຕິດຕາມນັກເດີນສຳຫຼວດໄປຫາເປົ້າໝາຍສຳພາດຢ່າງທົ່ວເຖິງ.

ໄລຍະທີ 2, ການເກັບກຳຂໍ້ມູນຄົວເຮືອນ, ໄດ້ດຳເນີນການເປັນເວລາ 56 ວັນ ແຕ່ວັນທີ 3 ພະຈິກ ຫາ ວັນທີ 28 ທັນວາ 2025. ການສຳຫຼວດໄດ້ລົງພະນັກງານພາກສະໜາມ 12.060 ຄົນ, ນຳໃຊ້ແທັບເລັດ 8.000 ເຄື່ອງ ແລະ ເຂົ້າເຖິງຄົວເຮືອນປະມານ 1,4 ລ້ານຄົວເຮືອນ ໃນທົ່ວປະເທດ. ກ່ອນໜ້ານັ້ນ, ໄດ້ຈັດຝຶກອົບຮົມແບບລຳດັບຂັ້ນ 4 ຂັ້ນໃນລະຫວ່າງເດືອນສິງຫາ ຫາ ຕຸລາ 2025, ສ້າງວິທະຍາກອນທັງໝົດ 2.887 ຄົນ ແລະ ນັກເດີນສຳຫຼວດປະມານ 9.173 ຄົນ ໃນ 415 ສະຖານທີ່.

ໄລຍະທີ 3, ການສຳຫຼວດປະເມີນຄຸນນະພາບ (PES), ໄດ້ດຳເນີນການແຕ່ວັນທີ 2 ກຸມພາ ຫາ ວັນທີ 17 ມີນາ 2026 ໃນ 184 ເຂດແຈງນັບຕົວແທນ, ໂດຍພະນັກງານສະເພາະ 277 ຄົນ ທີ່ເຮັດວຽກເປັນອິດສະຫຼະຈາກການສຳຫຼວດໃຫຍ່. ພາຍຫຼັງນັ້ນ, ທີມງານພາຍໃນ ແລະ ຊ່ຽວຊານ ໄດ້ສຸມໃສ່ການກວດແກ້, ອານາໄມ ແລະ ວິເຄາະຂໍ້ມູນ, ແລະ ໄດ້ເປີດໂຕຜົນການສຳຫຼວດຢ່າງເປັນທາງການ ໃນວັນທີ 19 ຕຸລາ 2026.

ໃນດ້ານງົບປະມານ, ລັດຖະບານໄດ້ສະໜອງເກືອບ 14,7 ລ້ານໂດລາ ຫຼື ປະມານ 63% ຂອງງົບປະມານທັງໝົດ (ລວມທັງເງິນກູ້ຈາກທະນາຄານໂລກ). ສ່ວນທີ່ເຫຼືອ ແມ່ນໄດ້ຮັບການສະໜັບສະໜຸນຈາກຄູ່ຮ່ວມພັດທະນາ, ຊຶ່ງສະແດງ ໃຫ້ເຫັນເຖິງຄວາມເປັນເຈົ້າການຂອງລັດຖະບານ ຕໍ່ວຽກງານນີ້.

IV. ການຄຸ້ມຄອງຄຸນນະພາບຂອງການສຳຫຼວດ

ຄຸນນະພາບຂອງການສຳຫຼວດ ໄດ້ຮັບການຄຸ້ມຄອງຢ່າງເຂັ້ມງວດໃນທຸກຂັ້ນຕອນ ຕາມຫຼັກການ ແລະ ຄຳແນະນຳຂອງ ສະຫະປະຊາຊາດ ວ່າດ້ວຍການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ.

ໃນຂັ້ນຕອນກະກຽມ, ແບບສອບຖາມ ແລະ ຄູ່ມື ໄດ້ຜ່ານການປຶກສາຫາລືກັບທຸກພາກສ່ວນກ່ຽວຂ້ອງ ທັງອົງການຈັດ ຕັ້ງ ພາກລັດ, ຄູ່ຮ່ວມພັດທະນາ ແລະ ອົງການສາກົນ, ອີງຕາມຄວາມຕ້ອງການປຸລິມະສິດຂອງຂະແໜງການ, ວາລະ ແຫ່ງຊາດ ແລະ ພັນທະການລາຍງານສາກົນ. ເຄື່ອງມືເກັບກຳຂໍ້ມູນ CAPI, ລະບົບຖານຂໍ້ມູນ ແລະ ແຜນທີ່ເຂດ ສຳ ຫຼວດແບບດີຈີຕອນໄດ້ຜ່ານການທົດລອງ ແລະການສຳຫຼວດທົດລອງກ່ອນນຳໃຊ້ຕົວຈິງ. ແຜນທີ່ດີຈີຕອນໄດ້ ກຳ ນົດເຂດສຳຫຼວດຢ່າງຈະແຈ້ງ ເພື່ອປ້ອງກັນການນັບຊ້ຳ ແລະ ການຕົກຫຼົ່ນ.

ໃນຂັ້ນພາກສະໜາມ, ຂໍ້ມູນໄດ້ຖືກສົ່ງແບບອອນລາຍ ແລະ ຕິດຕາມແບບທັນເວລາຜ່ານ Dashboard ເພື່ອກຳນົດ ຕິດຕາມການເກັບກຳຂໍ້ມູນພາກສະໜາມ ໃນແຕ່ລະມື້, ພ້ອມກັບການກວດກາຂໍ້ມູນຂັ້ນທີສອງ (Secondary data editing) ແລະ ຕາຕະລາງກວດກາພາກສະໜາມຢູ່ຂັ້ນສູນກາງ (Central office). ພາຍຫຼັງສຳເລັດການສຳຫຼວດ ພາກສະໜາມ ໄດ້ລົງກວດກາຄືນ 3.590 ເຂດສຳຫຼວດໃນເດືອນ ມີນາ 2026 ຫຼັງຈາກນັ້ນໄດ້ດຳເນີນການສຳຫຼວດປະ ເມີນຄຸນນະພາບ (PES), ມີນັກກວດກາ ແລະ ຜູ້ສັງເກດການອິດສະຫຼະເຂົ້າຮ່ວມໃນການຕິດຕາມຢ່າງໃກ້ຊິດ.

ໃນຂັ້ນຕອນປະມວນຜົນ, ຂໍ້ມູນໄດ້ຖືກກວດກາ ແລະ ອານາໄມຮ່ວມກັບຊ່ຽວຊານສາກົນ ກ່ອນການວິໄຈ ແລະ ຂຽນ ບົດລາຍງານ. ການສຳຫຼວດປະເມີນຄຸນນະພາບ ໄດ້ວັດແທກຄວາມຄົບຖ້ວນຂອງການຈົດນັບຢ່າງເປັນອິດສະຫຼະ ດ້ວຍ ວິທີສອງລະບົບ (Chandra Sekar–Deming).

ຜົນສະແດງໃຫ້ເຫັນວ່າ ມີພົນລະເມືອງປະມານ **497,1 ພັນຄົນ** ທີ່ບໍ່ໄດ້ຖືກຈົດນັບ, ຫຼື ອັດຕາການຕົກຫຼົ່ນສຸດທິປະ ມານ **7%**, ຊຶ່ງຕ່ຳກວ່າເກນ 10% ທີ່ຖືວ່າຍອມຮັບໄດ້ຕາມຫຼັກການສະຖິຕິ. ອີງຕາມຜົນດັ່ງກ່າວ, ພົນລະເມືອງທີ່ ຈົດນັບໄດ້ 6,74 ລ້ານຄົນ ໄດ້ຖືກປັບເປັນພົນລະເມືອງທີ່ອາໄສຢູ່ປະຈຳຕົວຈິງ 7,24 ລ້ານຄົນ. ອັດຕາການຕົກຫຼົ່ນສູງ ສຸດ ແມ່ນກະຈຸກຕົວຢູ່ 4 ແຂວງພາກໃຕ້.

ຈາກຜົນດັ່ງກ່າວ, ສູນສະຖິຕິແຫ່ງຊາດຂໍຢືນຢັນວ່າ ຂໍ້ມູນການສຳຫຼວດພົນລະເມືອງຄັ້ງທີ V ມີຄຸນນະພາບ ແລະຄວາມ ນ່າເຊື່ອຖື, ແລະ ສາມາດນຳໃຊ້ເປັນຂໍ້ມູນພື້ນຖານທາງການຂອງປະເທດ ໃນການວາງແຜນ ແລະ ສ້າງນະໂຍບາຍໄດ້ ຢ່າງໝັ້ນໃຈ.

V. ຜົນການສຳຫຼວດຕົ້ນຕໍ

ຜົນການສຳຫຼວດໄດ້ສະໜອງຂໍ້ມູນພື້ນຖານໃໝ່ ທີ່ຄົບຖ້ວນທີ່ສຸດ ນັບຕັ້ງແຕ່ປີ 2015, ລົງລາຍລະອຽດຮອດຂັ້ນເມືອງ ແລະ ບ້ານ. ໃນບົດລາຍງານໄດ້ນຳສະເໜີ ໃຊ້ຕົວເລກພົນລະເມືອງ 3 ໃນຈຸດປະສົງທີ່ແຕກຕ່າງກັນ: **6,74 ລ້ານຄົນ** ແມ່ນພົນລະເມືອງທີ່ຈົດນັບໄດ້ຕົວຈິງ ແລະ ເປັນຖານຂອງທຸກຕາຕະລາງໃນບົດລາຍງານ; **7,24 ລ້ານຄົນ** ແມ່ນພົນ ລະເມືອງທີ່ປັບຕາມ PES ແລະ ແມ່ນຕົວຫານທາງການ ສຳລັບ ການວາງແຜນ ແລະ ຄິດໄລ່ຕົວຊີ້ວັດ; ແລະ **7,55 ລ້ານຄົນ** ແມ່ນພົນລະເມືອງລາວທັງໝົດ ລວມທັງຜູ້ທີ່ອາໄສຢູ່ຕ່າງປະເທດ 313,8 ພັນຄົນ, ໃຊ້ສະເພາະໃນການວິ ເຄາະການຍົກຍ້າຍອອກ ແລະ ວຽກງານກົງສຸນ.

1. ຂະໜາດ, ການເຕີບໂຕ ແລະ ການແຈກຢາຍຂອງພົນລະເມືອງ

ການສຳຫຼວດໄດ້ຈົດນັບພົນລະເມືອງທີ່ອາໄສຢູ່ປະຈຳ 6.744,7 ພັນຄົນ (ຊາຍ 3.425,9 ພັນຄົນ, ຍິງ 3.318,8 ພັນ ຄົນ). ພາຍຫຼັງປັບຕາມ PES, ພົນລະເມືອງຕົວຈິງມີປະມານ 7,24 ລ້ານຄົນ, ເພີ່ມຂຶ້ນປະມານ 750 ພັນຄົນ ທຽບ

ກັບປີ 2015. ອັດຕາການເຕີບໂຕໄດ້ຫຼຸດລົງເຫຼືອ 1,1% ຕໍ່ປີ, ທຽບກັບ 1,45% ໃນໄລຍະ 2005–2015 ແລະ 2,5% ໃນໄລຍະ 1985–1995.

ເກືອບເຄິ່ງໜຶ່ງຂອງພົນລະເມືອງ ກະຈຸກຕົວຢູ່ 4 ແຂວງ: ສະຫວັນນະເຂດ 906 ພັນຄົນ (13,4%), ນະຄອນຫຼວງ ວຽງຈັນ 893 ພັນຄົນ (13,2%), ຈຳປາສັກ 615 ພັນຄົນ (9,1%) ແລະ ຫຼວງພະບາງ 471 ພັນຄົນ (7,0%). ແຂວງທີ່ເຕີບໂຕໄວທີ່ສຸດ ແມ່ນອັດຕະປື (2,95% ຕໍ່ປີ) ແລະ ເຊກອງ (2,80%), ໃນຂະນະທີ່ຈຳປາສັກ (−0,01%) ແລະ ສະຫວັນນະເຂດ (0,15%) ເກືອບບໍ່ເພີ່ມຂຶ້ນ ຍ້ອນໄວໜຸ່ມຍົກຍ້າຍອອກໄປນະຄອນຫຼວງວຽງ ຈັນ ແລະ ປະເທດໄທ. ພົນລະເມືອງອາໄສຢູ່ເຂດຕົວເມືອງ 34,5% ແລະ ຊົນນະບົດ 65,5%; ຍັງມີ 301,5 ພັນຄົນ ອາໄສຢູ່ເຂດຊົນນະບົດທີ່ບໍ່ມີເສັ້ນທາງເຂົ້າເຖິງ, ເກືອບ 30% ຢູ່ແຂວງຫົວພັນ. ຄວາມໜາແໜ້ນຂອງພົນລະເມືອງທົ່ວ ປະເທດ ແມ່ນ 28 ຄົນຕໍ່ຕາແລັດກິໂລແມັດ, ໂດຍນະຄອນຫຼວງວຽງຈັນ 228 ຄົນ ແລະ ຜົ້ງສາລີ 12 ຄົນ.

2. ໂຄງປະກອບດ້ານເພດ ແລະ ອາຍຸ

ໂຄງສ້າງອາຍຸກຳລັງປ່ຽນແປງຢ່າງວອງໄວ. ສັດສ່ວນເດັກອາຍຸ 0–14 ປີ ຫຼຸດລົງຈາກ 39,4% ໃນປີ 2005 ເປັນ 29,3% ໃນປີ 2025, ພົນລະເມືອງໄວແຮງງານ (15–64 ປີ) ເພີ່ມຂຶ້ນເປັນ 65,0%, ແລະ ຜູ້ສູງອາຍຸ 65 ປີຂຶ້ນໄປ ເພີ່ມຂຶ້ນເປັນ 5,7%. ອາຍຸກາງເພີ່ມຂຶ້ນຈາກ 23,5 ປີ (2015) ເປັນ 27,0 ປີ. ອັດຕາພຶ່ງພາລວມຫຼຸດລົງຈາກ 76,4 ໃນປີ 2005 ເປັນ 53,8 ຕໍ່ພົນລະເມືອງໄວແຮງງານ 100 ຄົນ, ຊຶ່ງເປີດໂອກາດປັນຜົນທາງປະຊາກອນ ສຳລັບ ການ ເຕີບໂຕທາງເສດຖະກິດ. ອັດຕາສ່ວນເພດ ແມ່ນ 103,2 ຊາຍ ຕໍ່ຍິງ 100 ຄົນ (100,5 ໃນປີ 2015), ແຕ່ເພດຍິງ ມີຈຳນວນຫຼາຍກວ່າ ນັບແຕ່ອາຍຸ 50 ປີຂຶ້ນໄປ.

3. ຄຸນລັກສະນະທາງສັງຄົມ ແລະ ຄວາມພິການ

ໃນຈຳນວນ 5,02 ລ້ານຄົນ ອາຍຸ 13 ປີຂຶ້ນໄປ, 62,8% ແຕ່ງງານແລ້ວ ແລະ 29,1% ບໍ່ເຄີຍແຕ່ງງານ; ເພດຍິງທີ່ ເປັນແມ່ໝ້າຍມີ 8,0% ທຽບກັບເພດຊາຍ 2,0%. ຊົນເຜົ່າລາວ ກວມເອົາ 54,8% ຂອງພົນລະເມືອງທີ່ມີສັນຊາດ ລາວ, ຕິດຕາມມາແມ່ນມົ້ງ (11,2%) ແລະ ຂະມຸ (10,9%). ພົນລະເມືອງນັບຖືສາສະໜາພຸດ 63,7% ແລະ ນັບ ຖືຜີ 33,6%. ພົນລະເມືອງອາຍຸ 10 ປີຂຶ້ນໄປ ປະມານ 99,6 ພັນຄົນ (1,9%) ມີຄວາມພິການຂັ້ນຮຸນແຮງ, ກະຈຸກ ຕົວຢູ່ໃນໄວສູງອາຍຸ, ແລະ ຫຼາຍກວ່າເຄິ່ງໜຶ່ງມີຄວາມຫຍຸ້ງຍາກຫຼາຍກວ່າໜຶ່ງດ້ານ.

4. ຄຸນລັກສະນະດ້ານການສຶກສາ

ອັດຕາຮູ້ໜັງສືຂອງພົນລະເມືອງອາຍຸ 15 ປີຂຶ້ນໄປ ແມ່ນ 83,5% (ຊາຍ 88,1%, ຍິງ 78,9%), ໃນນັ້ນໄວໜຸ່ມ 15–24 ປີ 91,1% ແຕ່ຜູ້ສູງອາຍຸ 65 ປີຂຶ້ນໄປພຽງ 58,6%. ອັດຕາຮູ້ໜັງສືຂອງເພດຍິງແຕກຕ່າງກັນຫຼາຍລະຫວ່າງ ນະຄອນຫຼວງວຽງຈັນ (95,1%) ແລະສາລະວັນ (66,0%). ອັດຕາການເຂົ້າຮຽນສຸດທິຫຼຸດລົງ ຢ່າງຮຸນແຮງຕາມລະ ດັບຊັ້ນ: ປະຖົມ 75,7%, ມັດທະຍົມຕອນຕົ້ນ 56,9%, ມັດທະຍົມຕອນປາຍ 27,9% ແລະ ຊັ້ນສູງ 3,2%. ພົນ ລະເມືອງອາຍຸ 6 ປີຂຶ້ນໄປ ປະມານ 18% ບໍ່ເຄີຍເຂົ້າຮຽນ, ໃນຂະນະທີ່ 14,1% ຮຽນຈົບມັດທະຍົມຕອນປາຍ ແລະ 9,9% ໄດ້ຮຽນຊັ້ນສູງ.

5. ຄຸນລັກສະນະທາງເສດຖະກິດ

ອັດຕາການເຂົ້າຮ່ວມກຳລັງແຮງງານຂອງພົນລະເມືອງອາຍຸ 10 ປີຂຶ້ນໄປ ຫຼຸດລົງຈາກ 69,1% ໃນປີ 2015 ເປັນ 62,7% (ຊາຍ 65,6%, ຍິງ 59,9%). ອັດຕາການວ່າງງານເພີ່ມຂຶ້ນຈາກ 2,1% ເປັນ 5,1%, ແລະ ການວ່າງງານ ຂອງໄວໜຸ່ມແມ່ນ 8,3%. ຜູ້ມີວຽກເຮັດງານທຳ ສ່ວນຫຼາຍຢູ່ໃນຂະແໜງກະສິກຳ, ປ່າໄມ້ ແລະ ປະມົງ (40,4%, ຫຼຸດລົງຈາກ 72,0% ໃນປີ 2015) ແລະ ການຄ້າຍົກ-ຄ້າຍ່ອຍ (23,0%). ວຽກງານທີ່ມີຄວາມສ່ຽງຍັງແຜ່ຫຼາຍ: 37,4% ເປັນແຮງງານຊ່ວຍວຽກຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງ ແລະ 28,0% ເຮັດວຽກດ້ວຍຕົນເອງ. ວຽກເຮືອນ ແລະ ວຽກເບິ່ງແຍງດູແລທີ່ບໍ່ໄດ້ຮັບຄ່າຈ້າງ ແມ່ນສາເຫດຂອງການບໍ່ມີກິດຈະກຳທາງເສດຖະກິດຂອງເພດຍິງ 28,5% ທຽບ ກັບເພດຊາຍ 12,0%.

6. ສັນຊາດ ແລະ ການຍົກຍ້າຍລະຫວ່າງປະເທດ

ພົນລະເມືອງສັນຊາດຕ່າງປະເທດ ມີ 77,2 ພັນຄົນ (1,1%), ເພີ່ມຂຶ້ນຈາກ 45,5 ພັນຄົນ ໃນປີ 2015. ຜູ້ທີ່ເກີດຢູ່ຕ່າງປະເທດມີພຽງ 36,0 ພັນຄົນ (0,5%), ສ່ວນຫຼາຍມາຈາກຫວຽດນາມ (46,9%), ຈີນ (27,7%) ແລະ ໄທ (15,9%). ສປປ ລາວ ເປັນປະເທດທີ່ມີການຍົກຍ້າຍອອກສຸດທີ່ຢ່າງຊັດເຈນ: ມີອະດີດສະມາຊິກຄົວເຮືອນ 313,8 ພັນຄົນ ອາໄສຢູ່ຕ່າງປະເທດ, ໃນນັ້ນ 87,7% ອາຍຸ 15–44 ປີ, 57,4% ເປັນເພດຍິງ, 90,9% ໄປປະເທດໄທ, ແລະ ສ່ວນຫຼາຍໄປເພື່ອຊອກວຽກເຮັດ.

7. ການຍົກຍ້າຍພາຍໃນ

ການຍົກຍ້າຍພາຍໃນມີຂະໜາດໃຫຍ່ກວ່າການຍົກຍ້າຍເຂົ້າຈາກຕ່າງປະເທດຫຼາຍເທົ່າ: ມີ 680,2 ພັນຄົນ (10,4%) ອາໄສຢູ່ນອກເມືອງເກີດຂອງຕົນ. ຜູ້ຍົກຍ້າຍສ່ວນຫຼາຍຢູ່ໃນໄວແຮງງານ ແລະ ມຸ່ງໜ້າໄປນະຄອນຫຼວງວຽງຈັນ, ບ່ອນທີ່ 30,0% ຂອງຜູ້ອາໄສຢູ່ປັດຈຸບັນ ໄດ້ຍ້າຍມາຈາກເມືອງອື່ນ.

8. ການຈະເລີນພັນ

ໃນ 12 ເດືອນກ່ອນການສຳຫຼວດ ມີເດັກເກີດ 123,4 ພັນຄົນ. ອັດຕາເກີດຫຍາບຫຼຸດລົງຈາກ 28,0 ຕໍ່ພັນ ໃນປີ 2015 ເປັນ 18,1 ຕໍ່ພັນ, ໂດຍສູງສຸດຢູ່ແຂວງໄຊສົມບູນ (26,5) ແລະຕ່ຳສຸດຢູ່ນະຄອນຫຼວງວຽງຈັນ (13,4). ອາຍຸສະເລ່ຍຂອງແມ່ຍິງເມື່ອມີລູກຄົນທຳອິດ ແມ່ນ 23,5 ປີ, ແລະ ປະມານໜຶ່ງສ່ວນສີ່ຂອງເພດຍິງອາຍຸ 15 ປີຂຶ້ນໄປ ຍັງບໍ່ມີລູກ. ອັດຕາການຈະເລີນພັນລວມ (TFR) ທີ່ປັບແລ້ວ ຈະໄດ້ນຳສະເໜີໃນບົດລາຍງານຫົວຂໍ້ສະເພາະ.

9. ການຕາຍ

ໃນ 12 ເດືອນກ່ອນການສຳຫຼວດ ມີການລາຍງານການຕາຍ 23,8 ພັນຄົນ (ຊາຍ 13,7 ພັນ, ຍິງ 10,1 ພັນ), ໃນນັ້ນເດັກອາຍຸຕ່ຳກວ່າ 5 ປີ ປະມານ 1,7 ພັນຄົນ. ອັດຕາຕາຍຫຍາບທີ່ຍັງບໍ່ທັນປັບ ແມ່ນ 3,5 ຕໍ່ພັນ, ຊຶ່ງເປັນຕົວເລກທີ່ຕ່ຳກວ່າຄວາມເປັນຈິງ ຍ້ອນການແຈ້ງການຕາຍບໍ່ຄົບ. ການຕາຍຂອງເພດຊາຍສູງຂຶ້ນຢ່າງກະທັນຫັນໃນ ໄວໜຸ່ມ, ໂດຍອັດຕາສ່ວນເພດຂອງການຕາຍເຖິງ 262 ຊາຍ ຕໍ່ຍິງ 100 ຄົນ ໃນກຸ່ມອາຍຸ 15–19 ປີ. ການຄາດຄະເນອັດຕາຕາຍທີ່ປັບແລ້ວ ແລະ ຄາດຄະເນອາຍຸຍືນ ຈະໄດ້ນຳສະເໜີໃນບົດລາຍງານຫົວຂໍ້ສະເພາະ.

10. ລັກສະນະສະເພາະຂອງຄົວເຮືອນ ແລະ ຄອບຄົວ

ຈຳນວນຄົວເຮືອນສ່ວນບຸກຄົນເພີ່ມຂຶ້ນ 53,2% ໃນໄລຍະ 20 ປີ ເປັນ 1,46 ລ້ານຄົວເຮືອນ. ຍ້ອນຄົວເຮືອນເພີ່ມຂຶ້ນໄວກວ່າພົນລະເມືອງ, ຂະໜາດຄົວເຮືອນສະເລ່ຍຈຶ່ງຫຼຸດລົງຈາກ 5,8 ຄົນ ໃນປີ 2005 ແລະ 5,3 ຄົນ ໃນປີ 2015 ເປັນ 4,5 ຄົນ. ຄົວເຮືອນທີ່ມີເພດຍິງເປັນຫົວໜ້າ ເພີ່ມຂຶ້ນຈາກ 13,2% ເປັນ 18,6%. ພົນລະເມືອງໃນຄົວເຮືອນລວມໝູ່ ມີ 177,1 ພັນຄົນ.

11. ຄຸນລັກສະນະຂອງທີ່ຢູ່ອາໄສຂອງຄົວເຮືອນ

ຄົວເຮືອນ 95,8% ເປັນເຈົ້າຂອງທີ່ຢູ່ອາໄສ, ແລະ 97,6% ມີຫຼັງຄາຖາວອນ. ແຕ່ຍັງມີຄວາມແຕກຕ່າງລະຫວ່າງພື້ນທີ່: ເຮືອນໃນເຂດຕົວເມືອງ 85,5% ມີຝາດິນຈີ່ ຫຼື ຊີມັງ, ທຽບກັບ 22,4% ໃນເຂດຊົນນະບົດທີ່ບໍ່ມີເສັ້ນທາງ. ຄົວເຮືອນທີ່ເຂົ້າເຖິງໄຟຟ້າ 97,2% (ໄຟຟ້າລະບົບສາຍສົ່ງ 93,1%, ແຕ່ພຽງ 73,7% ໃນເຂດທີ່ບໍ່ມີເສັ້ນທາງ), ນ້ຳດື່ມທີ່ໄດ້ຮັບການປັບປຸງ 79,2% (61,0% ໃນປີ 2015), ສ້ວມຖ່າຍທີ່ໄດ້ຮັບການປັບປຸງ 91,8% (73,2%), ມີໂທລະສັບມືຖື 89,7%, ແລະ ພົນລະເມືອງອາຍຸ 15 ປີຂຶ້ນໄປ ນຳໃຊ້ອິນເຕີເນັດ 69,8%. ສິ່ງທ້າທາຍທີ່ຍັງເຫຼືອຢູ່ແມ່ນພະລັງງານປຸງແຕ່ງອາຫານ: ຄົວເຮືອນ 82,9% ຍັງໃຊ້ໄມ້ຟືນ ແລະຖ່ານ, ມີພຽງ17,1% ໃຊ້ພະລັງງານສະອາດ.

VI. ການນຳໃຊ້ຂໍ້ມູນເຂົ້າໃນການສ້າງນະໂຍບາຍ ແລະ ການຕິດຕາມແຜນງານ

ຂໍ້ມູນການສຳຫຼວດພົນລະເມືອງ ຄັ້ງທີ V ແມ່ນພື້ນຖານສຳຄັນ ໃນການສ້າງນະໂຍບາຍທີ່ອີງໃສ່ຫຼັກຖານທັງໃນລະດັບຊາດ ແລະ ທ້ອງຖິ່ນ ໃນໄລຍະ 10 ປີຕໍ່ໜ້າ.

ກ່ອນອື່ນໝົດ, ຂໍ້ມູນຈະເປັນພື້ນຖານ (Baseline) ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026–2030), ໂດຍສະເພາະຕົວຊີ້ບອກດ້ານພົນລະເມືອງ, ການສຶກສາ, ແຮງງານ ແລະ ທີ່ຢູ່ອາໄສ, ແລະ ເປັນຕົວ ຫານໃນການຄິດໄລ່ GDP ແລະ GNI ຕໍ່ຫົວຄົນ. ຂໍ້ມູນຍັງສະໜອງຕົວຊີ້ບອກດັດຊະນີຊັບສິນມະນຸດ ສຳລັບການ ຫຼຸດພົ້ນອອກຈາກສະຖານະປະເທດດ້ອຍພັດທະນາ, ແລະ ຕົວຊີ້ບອກ SDGs ແຍກຕາມເພດ, ອາຍຸ ແລະ ພື້ນທີ່.

ຖັດມາ, ຂໍ້ມູນລະດັບບ້ານ ແລະ ແຜນທີ່ GIS ຈະຊ່ວຍໃຫ້ລັດຖະບານ ກຳນົດເປົ້າໝາຍຂອງວາລະແຫ່ງຊາດ ວ່າດ້ວຍ ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ 2027–2030 ໄດ້ຮອດຂັ້ນບ້ານ, ແລະ ຈັດສັນງົບປະມານ ສຳ ລັບໂຮງຮຽນ, ໂຮງໝໍ, ນ້ຳສະອາດ ແລະ ໄຟຟ້າ ໃຫ້ສອດຄ່ອງກັບຈຳນວນພົນລະເມືອງຕົວຈິງໃນແຕ່ລະເມືອງ. ນອກ ຈາກນັ້ນ, ຂໍ້ມູນຈະເປັນພື້ນຖານຂອງການຄາດຄະເນພົນລະເມືອງຮອດປີ 2055, ເພື່ອຮັບໃຊ້ວິໄສທັດໄລຍະຍາວຂອງ ພັກ ແລະ ນະໂຍບາຍກ່ຽວກັບປັນຜົນທາງປະຊາກອນ. ກອບຕົວຢ່າງໃໝ່ຈາກການສຳຫຼວດກໍຈະຖືກນຳໃຊ້ໃນການສຳ ຫຼວດຄົວເຮືອນ ເຊັ່ນ: ການສຳຫຼວດເສດຖະກິດ, ການສຳຫຼວດກຳລັງແຮງງານ, ການສ□າຫຼວດການຊົມໃຊ້ ແລະ ການ ໃຊ້ຈ່າຍຂອງຄົວເຮືອນ ແລະ ການສຳຫຼວດດັດສະນີໝາຍສັງຄົມລາວ.

ເພື່ອໃຫ້ການນຳໃຊ້ຂໍ້ມູນມີປະສິດທິຜົນ, ສູນສະຖິຕິແຫ່ງຊາດ ສະເໜີໃຫ້ທຸກກະຊວງ ແລະ ແຂວງ ນຳໃຊ້ຂໍ້ມູນການສຳ ຫຼວດພົນລະເມືອງ ເປັນຕົວເລກພົນລະເມືອງທາງການດຽວກັນ ໃນແຜນງານ ແລະ ບົດລາຍງານຂອງຕົນ; ປັບປຸງຕົວຊີ້ ບອກ ແລະ ເປົ້າໝາຍຂອງແຜນ 5 ປີ ໃຫ້ສອດຄ່ອງກັບຜົນການສຳຫຼວດ; ແລະ ຫຼີກເວັ້ນການສຳຫຼວດທີ່ຊ້ຳຊ້ອນກັບ ຂໍ້ມູນທີ່ມີຢູ່ແລ້ວໃນການສຳຫຼວດພົນລະເມືອງ.

VII. ການສ້າງຂີດຄວາມສາມາດ, ກົນໄກການປະສານງານ ແລະ ການເຂົ້າເຖິງຂໍ້ມູນ

ການສຳຫຼວດຄັ້ງນີ້ ໄດ້ຍົກສູງຂີດຄວາມສາມາດດ້ານສະຖິຕິດິຈິຕອນ ໃຫ້ແກ່ພະນັກງານຫຼາຍກວ່າ 12.000 ຄົນ ໃນ ທຸກຂັ້ນ. ພະນັກງານສະຖິຕິຂັ້ນສູນກາງ, ແຂວງ ແລະ ເມືອງ ໄດ້ຝຶກປະຕິບັດຕົວຈິງການນຳໃຊ້ CAPI, GIS, ການ ຄຸ້ມຄອງຖານຂໍ້ມູນ, ການອານາໄມຂໍ້ມູນ ແລະ ການວິເຄາະປະຊາກອນສາດ ຮ່ວມກັບຊ່ຽວຊານສາກົນ. ແທັບເລັດ 8.000 ເຄື່ອງ, ລະບົບເຊີບເວີ ແລະ ແຜນທີ່ດິຈິຕອນໄດ້ກາຍເປັນຊັບສິນຂອງລະບົບສະຖິຕິແຫ່ງຊາດ ທີ່ສາມາດນຳໃຊ້ ໃນການສຳຫຼວດຕໍ່ໄປ.

ການສຳຫຼວດຍັງໄດ້ສ້າງກົນໄກປະສານງານທີ່ເຂັ້ມແຂງ. ຄະນະຊີ້ນຳຂັ້ນສູນກາງ, ແຂວງ, ເມືອງ ແລະ ອົງການປົກຄອງ ບ້ານໄດ້ປະສານສົມທົບກັນຢ່າງໃກ້ຊິດ ໃນການໂຄສະນາ, ຄັດເລືອກພະນັກງານ ແລະ ຕິດຕາມພາກສະໜາມ. ການສຳ ຫຼວດ ໄດ້ຮັບການສະໜັບສະໜຸນຈາກຄູ່ຮ່ວມພັດທະນາ ໂດຍມີ UNFPA ເປັນອົງການນຳພາຂອງສະຫະປະຊາຊາດ, ລວມທັງ ທະນາຄານໂລກ, UNICEF, ອົດສະຕາລີ, ສະວິດ, ລັກເຊັມບວກ, ເຍຍລະມັນ, ສະຫະລັດອາເມລິກາ ແລະ ສາທາລະນະລັດປະຊາຊົນຈີນ ແລະ ອື່ນໆ. ກົນໄກດັ່ງກ່າວ ແມ່ນພື້ນຖານທີ່ດີ ສຳລັບການພັດທະນາລະບົບສະ ຖິຕິແຫ່ງຊາດໃນຕໍ່ໜ້າ.

ໃນດ້ານການເຂົ້າເຖິງຂໍ້ມູນ, ສູນສະຖິຕິແຫ່ງຊາດຈະສ້າງໄຟລ໌ຂໍ້ມູນສຳລັບຜູ້ນຳໃຊ້ ທີ່ປົກປ້ອງຄວາມລັບຂອງຜູ້ໃຫ້ຂໍ້ມູນ ຕາມກົດໝາຍວ່າດ້ວຍສະຖິຕິ ແລະ ລະບຽບການເຜີຍແຜ່ຂໍ້ມູນສະຖິຕິທາງການ. ຜົນການສຳຫຼວດ ແລະ ບົດລາຍ ງານຕ່າງໆ ຈະໄດ້ເຜີຍແຜ່ຜ່ານເວັບໄຊກະຊວງການເງິນ, ສູນສະຖິຕິແຫ່ງຊາດ ແລະ UNFPA, ພ້ອມທັງຜົນຜະລິດທີ່ ງ່າຍຕໍ່ການນຳໃຊ້ ເພື່ອໃຫ້ແຕ່ລະຂະແໜງການ, ທ້ອງຖິ່ນ ແລະ ນັກວິຈັຍ ສາມາດນຳໃຊ້ຂໍ້ມູນໄດ້ຢ່າງກວ້າງຂວາງ.

VIII. ສະຫຼຸບຕີລາຄາຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ສິ່ງທີ່ທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້

ຈຸດດີ: ລັດຖະບານ ກໍ່ຄືຄະນະຊີ້ນຳແຕ່ລະຂັ້ນ ໄດ້ເອົາໃຈໃສ່ ແລະ ຊີ້ນຳຢ່າງໃກ້ຊິດ; ອຳນາດການປົກຄອງແຕ່ລະຂັ້ນ ເຫັນໄດ້ຄວາມສຳຄັນ ແລະ ໃຫ້ຄວາມຮ່ວມມືເປັນຢ່າງດີ; ແລະ ຕະຫຼອດຂະບວນການສຳຫຼວດຮັກສາໄດ້ ຄວາມສະ ຫງົບ ແລະ ຄວາມປອດໄພໄດ້ 100%. ລັດຖະບານໄດ້ສະໜອງງົບປະມານທັນເວລາ ປະມານ 60% ຂອງງົບປະ ມານທັງໝົດ. ກະຊວງເຕັກໂນໂລຊີ ແລະ ການສື່ສານ, ບໍລິເຄືອຄ່າຍໂລະສັບ ໄດ້ສະໜອງຊິມກາດ ສຳລັບການເຂົ້າເຖິງ ອິນເຕີເນັດຄວາມໄວສູງ, ຄະນະອິບຮົມ ແລະ ໂຄສະນາສູນກາງພັກ ໄດ້ໃຫ້ການຊ່ວຍເຫຼືອວຽກງານໂຄສະນາເຜີຍແຜ່. ຄູ່ຮ່ວມພັດທະນາໄດ້ສະໜັບສະໜຸນດ້ານວິຊາການ ແລະ ລະດົມທຶນ ປະມານ 40% ຂອງງົບປະມານທັງໝົດ. ການ

ນຳໃຊ້ CAPI ແລະ GIS ເຮັດໃຫ້ການເກັບກຳຂໍ້ມູນວອງໄວ ແລະ ຕິດຕາມໄດ້ທັນເວລາ; ການສຳຫຼວດໄດ້ຄອບຄຸມ ຈຳນວນອາຄານທັງໝົດໄດ້ປະມານ 99%, ແລະ ຜົນການສຳຫຼວດໄດ້ເຜີຍແຜ່ພາຍໃນ 10 ເດືອນ ຫຼັງຈາກການສຳ ຫຼວດພາກສະໜາມ.

ຈຸດອ່ອນ ແລະ ຂໍ້ຄົງຄ້າງທີ່ທ້າທາຍ: ເນື່ອງຈາກເປັນຄັ້ງທຳອິດທີ່ນຳໃຊ້ເຄື່ອງມືເອເລັກໂທຼນິກ, ນັກເດີນສຳຫຼວດ ແລະ ນັກກວດກາ ຍັງມີຂໍ້ຈຳກັດດ້ານຄວາມສາມາດໃນການນຳໃຊ້ເຄື່ອງມືດັ່ງກ່າວ, ແລະ ນັກເດີນສຳຫຼວດເພດຍິງມີ ພຽງປະມານ 12%. ການຈັດສົ່ງອຸປະກອນ ແລະ ການໂອນງົບປະມານໃຫ້ແຂວງຍັງຊັກຊ້າ; ບາງແຂວງຍັງບໍ່ສາມາດ ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ແລະ ງົບປະມານ ໃຫ້ທ້ອງການສຳຫຼວດຂັ້ນສູນກາງ ທ່ວງທັນກັບເວລາທີ່ ກຳນົດ. ເຂດຫ່າງໄກຊອກຫຼີກຍັງບໍ່ມີສັນຍານອິນເຕີເນັດ ເຮັດໃຫ້ຍຸ້ງຍາກໃນການນຳໃຊ້ແຜນທີ່ ແລະ ການສົ່ງຂໍ້ມູນ; ແລະ ຍັງຂາດນາຍແປພາສາຕ່າງປະເທດ ແລະ ພາສາຊົນເຜົ່າ. ການລົງແຈງນັບຄືນໃນ 3.590 ເຂດສຳຫຼວດສະແດງ ໃຫ້ເຫັນວ່າ ຍັງມີຊ່ອງວ່າງຂອງການຄຸ້ມຄອງໃນໄລຍະຕົ້ນ ແລະ ເຮັດໃຫ້ການອານາໄມຂໍ້ມູນລ່າຊ້າໄປ. ຂໍ້ມູນການເສຍ ຊີວິດ ແລະການເຄື່ອນຍ້າຍໄປຕ່າງປະເທດ ຄາດວ່າຈະຕ່ຳກວ່າຕົວຈິງ ແລະ ຕ້ອງປັບດ້ວຍວິທີປະຊາກອນສາດ. ນອກ ຈາກນັ້ນ, ອັດຕາການຕົກຫຼົ່ນສຸດທິປະມານ 7% ແລະ ກະຈຸກຕົວສູງຢູ່ 4 ແຂວງພາກໃຕ້ ສະແດງໃຫ້ເຫັນວ່າ ການຈົດ ນັບໃນບາງພື້ນທີ່ ຍັງຕ້ອງໄດ້ປັບປຸງໃນການສຳຫຼວດຄັ້ງຕໍ່ໄປ.

ບົດຮຽນທີ່ຖອດຖອນໄດ້: ໜຶ່ງ, ການຄັດເລືອກນັກເດີນສຳຫຼວດ ແລະ ນັກກວດກາ ໃຫ້ຖືກຕ້ອງຕາມມາດຕະ ຖານ ແລະ ເງື່ອນໄຂດ້ານຄວາມຮູ້ຄວາມສາມາດ ແລະ ປະສົບການ ແມ່ນກະແຈໃຈກາງຂອງຄຸນນະພາບຂໍ້ມູນ. **ສອງ,** ການກະກຽມອຸປະກອນ, ແຜນທີ່ເຂດສຳຫຼວດ, ການຕິດຕັ້ງແອັບລົງແທັບເລັດ ແລະ ການສະໜອງງົບປະມານ ໃຫ້ ພ້ອມກ່ອນການຝຶກອົບຮົມ, ເຮັດໃຫ້ການຝຶກອົບຮົມດຳເນີນໄປຕາມວາລະ ແລະ ມີປະສິດທິພາບ; **ສາມ,** ກົນໄກປະ ສານງານລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງການຕິດຕາມຜ່ານ Dashboard ຊ່ວຍໃຫ້ແກ້ໄຂບັນຫາ ໄດ້ທ່ວງທັນ. **ສີ່,** ວຽກງານໂຄສະນາເຮັດໃຫ້ປະຊາຊົນເຫັນໄດ້ຄວາມສຳຄັນຂອງການສຳຫຼວດ, ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນຢ່າງຄົບຖ້ວນ ແລະ ຖືກຕ້ອງ. **ຫ້າ,** ການທີ່ມີອົງການ UNFPA ເປັນຈຸດໃຈກາງ ໃນການປະສານງານ ຄູ່ຮ່ວມພັດທະນາ ແລະ ຈັດຫາຊ່ຽວຊານຊ່ວຍເຫຼືອດ້ານວິຊາການ, ເຮັດໃຫ້ການສະໜັບສະໜຸນ ມີຄວາມສອດຄ່ອງ ແລະ ມີປະສິດທິຜົນ.

IX. ສະຫຼຸບ, ແຜນການຕໍ່ໜ້າ ແລະ ຂໍ້ສະເໜີ

ສະຫຼຸບ

ຜົນການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ຄັ້ງທີ V ໄດ້ສະແດງໃຫ້ເຫັນວ່າ ພົນລະເມືອງຂອງ ສປປ ລາວ ມີປະ ມານ 7,24 ລ້ານຄົນ, ເພີ່ມຂຶ້ນ 750 ພັນຄົນໃນໄລຍະ 10 ປີ, ແຕ່ອັດຕາການເຕີບໂຕໄດ້ຫຼຸດລົງເຫຼືອ 1,1% ຕໍ່ປີ. ຕົວ ເລກດັ່ງກ່າວ ຄວນໄດ້ນຳໃຊ້ເປັນຕົວເລກພົນລະເມືອງທາງການໃນການວາງແຜນ ແລະຄິດໄລ່ຕົວຊີ້ວັດຂອງປະເທດ. ຂໍ້ມູນແມ່ນມີຄຸນນະພາບ ແລະ ເຊື່ອຖືໄດ້, ໂດຍອັດຕາການຕົກຫຼົ່ນສຸດທິປະມານ 7% ຕ່ຳກວ່າເກນ 10% ທີ່ຍອມ ຮັບໄດ້ທາງດ້ານສະຖິຕິ, ແລະ ພ້ອມນຳໃຊ້ເຂົ້າໃນການຕິດຕາມແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ X, ການຫຼຸດ ພົ້ນຈາກສະຖານະປະເທດ ດ້ອຍພັດທະນາ ແລະ SDGs.

ປະເທດກຳລັງຢູ່ໃນໄລຍະໂອກາດປັນຜົນທາງປະຊາກອນ, ເຊິ່ງພົນລະເມືອງໄວແຮງງານກວມເອົາ 65,0%. ແຕ່ໂອ ກາດນີ້ຈະກາຍເປັນຜົນປະໂຫຍດໄດ້ກໍ່ຕໍ່ເມື່ອ ມີການລົງທຶນໃສ່ຄົນຢ່າງທັນການ, ຍ້ອນອັດຕາການເຂົ້າຮຽນມັດທະຍົມ ຕອນປາຍມີພຽງ 27,9% ແລະ ການວ່າງງານຂອງໄວໜຸ່ມຢູ່ທີ່ 8,3%. ພ້ອມກັນນັ້ນ, ມີຄົນລາວ 313,8 ພັນຄົນ ຊຶ່ງ ສ່ວນຫຼາຍເປັນໄວໜຸ່ມ ແລະ ເພດຍິງ ໄດ້ໄປອາໄສຢູ່ຕ່າງປະເທດ ໂດຍສະເພາະປະເທດໄທ, ໃນຂະນະທີ່ການຍົກຍ້າຍ ພາຍໃນມຸ່ງໜ້າເຂົ້ານະຄອນຫຼວງວຽງຈັນ. ດັ່ງນັ້ນ, ການລົງທຶນໃສ່ການສຶກສາ, ທັກສະແຮງງານ ແລະ ການສ້າງວຽກ ເຮັດງານທຳພາຍໃນປະເທດ ແມ່ນບຸລິມະສິດທີ່ສຳຄັນ.

ການບໍລິການພື້ນຖານໄດ້ປັບປຸງຢ່າງເຫັນໄດ້ຊັດ: ຄົວເຮືອນ 97,2% ເຂົ້າເຖິງໄຟຟ້າ ແລະ 91,8% ມີສ້ວມຖ່າຍ ທີ່ໄດ້ ຮັບການປັບປຸງ. ແຕ່ຊ່ອງວ່າງລະຫວ່າງພື້ນທີ່ ຍັງກວ້າງ: ຍັງມີ 301,5 ພັນຄົນ ອາໄສຢູ່ບ້ານທີ່ບໍ່ມີເສັ້ນທາງເຂົ້າເຖິງ, ອັດ

ຕາຮູ້ໜັງສືຂອງເພດຍິງ ແຕກຕ່າງກັນຈາກ 95,1% ໃນນະຄອນຫຼວງວຽງຈັນ ເຫຼືອ 66,0% ໃນແຂວງສາລະວັນ, ແລະ ຄົວເຮືອນ 82,9% ຍັງໃຊ້ໄມ້ຟືນ ແລະ ຖ່ານປຸງແຕ່ງອາຫານ. ຂໍ້ມູນລະດັບບ້ານຈາກການສຳຫຼວດ ຈະຊ່ວຍໃຫ້ ລັດຖະບານກຳນົດເປົ້າໝາຍຂອງອາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄດ້ ຖືກຈຸດ ແລະ ມີປະສິດທິຜົນ.

ແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ

ໃນໄລຍະ 2026–2027, ສູນສະຖິຕິແຫ່ງຊາດຈະສຸມໃສ່ເຜີຍແຜ່ບົດລາຍງານຜົນການສຳຫຼວດ ແລະ ບົດລາຍງານ PES ໃຫ້ແກ່ກະຊວງ, ແຂວງ ແລະ ທຸກພາກສ່ວນໃຫ້ກວ້າງຂວາງ, ພ້ອມທັງສ້າງ ແລະ ເຜີຍແຜ່ບົດລາຍງານຂັ້ນແຂວງ ຄົບທັງ 18 ແຂວງ. ພ້ອມກັນນັ້ນ, ຈະວິໄຈລົງເລິກເປັນຫົວຂໍ້ສະເພາະ ກ່ຽວກັບການເກີດ ແລະ ການຕາຍ, ການຍົກ ຍ້າຍ ແລະ ການຂະຫຍາຍຕົວເມືອງ, ປັນຜົນທາງປະຊາກອນ, ເດັກ ແລະ ໄວໜຸ່ມ, ຜູ້ສູງອາຍຸ, ຜູ້ພິການ, ການສຶກສາ, ແຮງງານ, ບົດບາດຍິງ-ຊາຍ ແລະ ທີ່ຢູ່ອາໄສ, ແລະ ສ້າງການຄາດຄະເນພົນລະເມືອງລະດັບຊາດ ແລະ ແຂວງ ຮອດປີ 2055 ເພື່ອຮັບໃຊ້ວິໄສທັດໄລຍະຍາວຂອງພັກ.

ໃນດ້ານການນຳໃຊ້ຂໍ້ມູນ, ສູນສະຖິຕິແຫ່ງຊາດຈະເຜີຍແຜ່ໄຟລ໌ຂໍ້ມູນສຳລັບຜູ້ນຳໃຊ້ ແລະ ຝຶກອົບຮົມການນຳໃຊ້ຂໍ້ມູນ ໃຫ້ແກ່ກະຊວງ ແລະ ແຂວງ; ປຶກສາຫາລື ແລະ ຄົ້ນຄວ້າຄວາມເປັນໄປໄດ້ ໃນການເຊື່ອມໂຍງຖານຂໍ້ມູນພົນລະເມືອງ ກັບຖານຂໍ້ມູນການຂຶ້ນທະບຽນ ຂອງກະຊວງປ້ອງ ກັນຄວາມສະຫງົບ, ກະຊວງສຶກສາທິການ ແລະ ກີລາ, ກະຊວງສາ ທາລະນະສຸກ ແລະ ກະຊວງແຮງງານ ແລະ ສະວັດດີການສັງຄົມ; ແລະ ນຳໃຊ້ແຜນທີ່ ແລະ ບັນຊີຄົວເຮືອນເປັນ ກອບຕົວຢ່າງໃໝ່ ສຳລັບ ການສຳຫຼວດຕົວອື່ນໆ ໃນຂັ້ນຕໍ່ໄປ.

ຂໍ້ສະເໜີ

ສູນສະຖິຕິແຫ່ງຊາດ ຂໍສະເໜີ 3 ບັນຫາ: **ໜຶ່ງ,** ນຳໃຊ້ຕົວເລກພົນລະເມືອງ 7,24 ລ້ານຄົນ ເປັນ ຂໍ້ມູນພົນລະເມືອງ ທາງການຂອງ ສປປ ລາວ ແລະ ເປັນຖານໃນການອ້າງແຜນ; ສອງ, ໃຫ້ກະຊວງ, ອົງການ ແລະ ແຂວງນຳໃຊ້ຂໍ້ມູນ ດັ່ງກ່າວ ເຂົ້າໃນການອ້າງແຜນ, ຈັດສັນງົບປະມານ ແລະ ຕິດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X; **ສາມ,** ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ສືບຕໍ່ສະໜັບສະໜຸນງົບປະມານ ແລະ ວິຊາການ ໃຫ້ແກ່ ການວິໄຈລົງເລິກ ແລະ ການເຜີຍແຜ່ຂໍ້ມູນໃຫ້ກວ້າຂວາງ ໃນຂັ້ນຕໍ່ໄປ.

ສູນສະຖິຕິແຫ່ງຊາດ, ກະຊວງການເງິນ ຂໍສະແດງຄວາມຂອບໃຈຢ່າງສູງມາຍັງພັກ ແລະ ລັດຖະບານ, ຄະນະຊີ້ນຳການ ສຳຫຼວດທຸກຂັ້ນ, ອຳນາດການປົກຄອງທ້ອງຖິ່ນ ແລະ ບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ທີ່ໄດ້ຊີ້ນຳ ແລະ ໃຫ້ການ ຮ່ວມມືຢ່າງໃກ້ຊິດ. ຂໍຂອບໃຈພະນັກງານພາກສະໜາມຫຼາຍກວ່າ 12.000 ຄົນ ທີ່ໄດ້ເຮັດ ວຽກດ້ວຍຄວາມມຸ່ງໝັ້ນ ແລະ ອຸດົມການ, ແລະ ປະຊາຊົນລາວທັງປະເທດ ທີ່ໄດ້ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນຢ່າງຈິງໃຈ.

ສຸດທ້າຍ, ຂໍຂອບໃຈອົງການ UNFPA ແລະ ບັນດາຄູ່ຮ່ວມພັດທະນາ ລວມທັງ ທະນາຄານໂລກ, UNICEF, ອົດ ສະຕາລີ, ສະວິດ, ລັກເຊັມບຸ, ເຍຍລະມັນ, ສະຫະລັດອາເມລິກາ ແລະ ສາທາລະນະລັດປະຊາຊົນຈີນ ແລະ ທຸກພາກ ສ່ວນ ທີ່ໄດ້ສະໜັບ ສະໜຸນທັງດ້ານວິຊາການ ແລະ ງົບປະມານ ໃຫ້ແກ່ການສຳຫຼວດຄັ້ງນີ້ສຳເລັດລົງດ້ວຍດີ.

ຂໍຂອບໃຈ